World Vision



# World Vison Laos Annual Report 2012

## Food security

Subsistence farming remains the main source of income for families in poor areas of Lao PDR. Most families grow rice but often do not have any surplus to sell for much needed income. World Vision is working with communities to improve yields of existing crops and to also diversify the crops being grown. In addition, we are helping communities gain access to markets for their surplus harvest. The following summarises our main activities in this area in 2012:




Trained over 1,700 farmers in 84 villages in improved rice cultivation techniques, leading to better crop yields. Previously, farmers did not grow enough food and their family would go hungry for four to six months of the year. Now they not only have enough to feed their families but also have some surplus to sell at the market.




Provided microfinance options to 152 communities through Village Development Funds. The Funds give villagers access to small loans that can be used to establish a small business or to help a family through an emergency. Each Fund is provided with US$400 and is managed by a local committee consisting of five villagers who receive special training from World Vision. The scheme also promotes saving amongst villagers giving them access to basic banking that helps them secure a better future for their families.



Gave farmers better assets to work with by distributing livestock (pigs, chickens, goats and cows) to 611 families. These farmers were trained on how to raise and breed the livestock they received so that they can use them to feed their families and sell offspring for much needed income. In addition, World Vision provided seeds to 132 farmers and trained them on how to plant and tend to their crops to ensure high yields. The seeds provided were for cash crops such as corn, beans, and eggplant which are easy to grow with the right knowledge and surpluses can be sold at markets.

CHANGE 4 Children

## ການຄ້ຳປະກັນ ສະບຽງອາຫານ

ການປູກຝັງ, ລ້ຽງສັດ ແມ່ນຖືເປັນແຫຼ່ງລາຍຮັບຫຼັກຂອງບັນດາຄອບຄົວທີ່ຢູ່ໃນເຂດທຸກຍາກຂອງ ສ ປ ປ ລາວ. ຄອບຄົວສ່ວນຫຼາຍແມ່ນປູກເຂົ້າ ແຕ່ບໍ່ມີສ່ວນເຫຼືອໄວ້ສຳລັບຂາຍເພື່ອມີລາຍຮັບຕາມທີ່ຕ້ອງການ. ອົງການສຸພະນິມິດ ໄດ້ເຮັດວຽກຮ່ວມກັບຊຸມຊົນເພື່ອຍົກຜົນຜະລິດຂອງການປູກຝັງໃຫ້ສູງຂຶ້ນ ແລະ ເຮັດໃຫ້ພືດທີ່ປູກນັ້ນມີຄວາມຫຼາກຫຼາຍ ສິ່ງສຳຄັນອີກອັນໜຶ່ງແມ່ນຊ່ວຍໃຫ້ຊຸມຊົນເຂົ້າເຖິງຕະຫຼາດເພື່ອທີ່ຈະໄດ້ຂາຍຜົນຜະລິດສ່ວນເຫຼືອພາຍຫລັງເກັບກ່ຽວຜົນລະປູກຂອງເຂົາເຈົ້າ. ຂ້າງລຸ່ມນີ້ແມ່ນການສັງລວມບັນດາກິດຈະກຳຫຼັກຂອງວຽກງານໃນຂົງເຂດນີ້ສຳລັບປີ 2012.




ໄດ້ຝຶກອົບຮົມໃຫ້ຊາວກະສິກອນຫຼາຍກ່ວາ 1,700 ຄົນ ໃນຈຳນວນ 84 ບ້ານກ່ຽວກັບການປັບປຸງເຕັກນິກການປູກເຂົ້າ ແລະ ພືດ ເພື່ອໃຫ້ໄດ້ຮັບຜົນຜະລິດສູງຂຶ້ນ. ໃນເມື່ອກ່ອນ, ຊາວກະສິກອນບໍ່ມີອາຫານພຽງພໍສຳລັບຄອບຄົວຂອງເຂົາເຈົ້າຕະຫຼອດປີ ແລະ ພາໃຫ້ເກີດມີຄວາມອຶດຫິວເປັນເວລາ 4 ຫາ 6 ເດືອນ. ໃນປັດຈຸບັນນີ້, ພວກເຂົາມີອາຫານພຽງພໍສຳລັບຄອບຄົວ ແລະ ຍັງມີສ່ວນເຫຼືອທີ່ສາມາດຂາຍອອກຕະຫຼາດເພື່ອເປັນລາຍຮັບ.



ສະໜອງດ້ານນການເງິນຈຸລະພາກໃຫ້ແກ່ 152 ຊຸມຊົນ ໂດຍຜ່ານກອງທຶນການພັດທະນາບ້ານ. ກອງທຶນແມ່ນເຮັດໃຫ້ຊຸມຊົນເຂົ້າເຖິງເງິນກູ້ຂະໜາດນ້ອຍເຊິ່ງເຮັດໃຫ້ພວກເຂົາສາມາດດຳເນີນທຸລະກິດຂະໜາດນ້ອຍ ເພື່ອສ້າງລາຍຮັບ ຫຼື ສາມາດຊ່ວຍຄອບຄົວໄດ້ໃນກໍລະນີສຸກເສີນ. ແຕ່ລະກອງທຶນທີ່ໄດ້ສະໜອງໃຫ້ມີມູນຄ່າປະມານ 400 ໂດລາສະຫະລັດ ແລະ ມີການບໍລິຫານໂດຍຄະນະກຳມະການກອງທຶນເຊິ່ງປະກອບດ້ວຍຊາວບ້ານຈຳນວນ 5 ທ່ານ ທີ່ໄດ້ຮັບການຝຶກອົບຮົມຈາກອົງການສຸພະນິມິດ. ກິດຈະກຳນີ້ ຍັງສົ່ງເສີມໃຫ້ຊາວບ້ານສາມາດທ້ອນເງິນ. ຜົນຈາກການຈັດຕັ້ງປະຕິບັດ, ຊາວບ້ານສາມາດເຂົ້າເຖິງລະບົບທະນາຄານຂັ້ນພື້ນຖານເພື່ອຮັບປະກັນໃຫ້ຄອບຄົວມີອານາຄົດທີ່ດີຂຶ້ນ.



ເຮັດໃຫ້ຊາວກະສິກອນມີຊັບສິນໂດຍການສະໜອງສັດລ້ຽງເຊັ່ນ: (ໝູ, ໄກ່, ແບ້ ແລະ ງົວ) ຈຳນວນ 611 ຄອບຄົວ. ບັນດາຊາວກະສິກອນຜູ້ໄດ້ຮັບສັດລ້ຽງແມ່ນໄດ້ຜ່ານການຝຶກອົບຮົມກ່ຽວກັບວິທີການລ້ຽງສັດ ແລະ ການປະສົມພັນສັດໃຫ້ອອກແມ່ແຜ່ລູກເພື່ອເປັນອາຫານ ແລະ ຂາຍເປັນລາຍຮັບແກ່ຄອບຄົວ. ນອກຈາກນີ້, ອົງການສຸພະນິມິດ ຍັງສະໜອງແນວພັນພືດໃຫ້ແກ່ຊາວກະສິກອນ ຈຳນວນ 132 ຄົນ ແລະ ຝຶກອົບຮົມກ່ຽວກັບວິທີການປູກ ແລະ ການບົວລະບັດ ເພື່ອເຮັດໃຫ້ຜົນຜະລິດເພີ່ມສູງຂຶ້ນ. ພ້ອມກັນນັ້ນ, ຍັງໄດ້ສະໜອງແນວພັນພືດແຕ່ລະຊະນິດເຊັ່ນ: ສາລີ, ໝາກຖົ່ວ ແລະ ໝາກເຂືອ ເຊິ່ງເປັນພືດທີ່ປູກງ່າຍສາມາດນຳໃຊ້ຄວາມຮູ້ພື້ນຖານທີ່ມີຢູ່ແລ້ວ ແລະ ສາມາດຂາຍຜົນຜະລິດສ່ວນເຫຼືອ ອອກຕະຫຼາດໄດ້ອີກດ້ວຍ.

contact us

World Vision Lao PDR
333 Nong Bone Road
P.O. Box 312
Vientiane, Lao PDR 1005

Tel: 856 21 414 169, 452, 100
Fax: 856 21 451 101
Email: Laos@wvi.org
Web: www.wvi.org/laos

World Vision